ທຸກການເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ ຕ້ອງໄດ້ຮັບການຂຶ້ນທະບຽນວິສາຫະກິດ ແລະ ຕ້ອງໄດ້ຮັບອະນຸຍາດລົງທຶນ ຫຼື ອະນຸຍາດດຳເນີນທຸລະກິດ ກ່ອນ.

ວິສາຫະກິດ ທີ່ໄດ້ຮັບໃບອະນຸຍາດລົງທຶນ, ໃບອະນຸຍາດດຳເນີນທຸລະກິດ ຫຼື ມີກິດຈະການລະບຸໃນດ້ານຫຼັງໃບທະບຽນວິສາຫະກິດ ແມ່ນສາມາດເລີ່ມຕົ້ນເຄື່ອນໄຫວທຸລະກິດດັ່ງກ່າວ ຕາມກົດໝາຍ ແລະ ລະບຽບການ.

ໃບທະບຽນວິສາຫະກິດໜຶ່ງ ອາດມີຫຼາຍໃບອະນຸຍາດລົງທຶນ ຫຼື ໃບອະນຸຍາດດຳເນີນທຸລະກິດ.

ຜູ້ລົງທຶນ (ພາຍໃນ ຫຼື ຕ່າງປະເທດ) ທີ່ມີຈຸດປະສົງສ້າງຕັ້ງ ແລະ ເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ ຕ້ອງປະຕິບັດເງື່ອນໄຂ ແລະ ຂັ້ນຕອນ ຕາມແຕ່ລະປະເພດກິດຈະການ ດັ່ງນີ້:

1. ກິດຈະການໃນບັນຊີຄວບຄຸມ ຫຼື ກິດຈະການສຳປະທານ ແມ່ນໃຫ້ຍື່ນຄຳຮ້ອງຂໍອະນຸຍາດລົງທຶນ ແລະ ຂຶ້ນທະບຽນວິສາຫະກິດ ຕາມຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

2. ກິດຈະການນອກບັນຊີຄວບຄຸມ ແມ່ນໃຫ້ຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ໃນນີ້:

- ກິດຈະການທີ່ບໍ່ຈຳເປັນຂໍອະນຸຍາດດຳເນີນທຸລະກິດ ແມ່ນເຈົ້າໜ້າທີ່ທະບຽນວິສາຫະກິດ ຈະລະບຸກິດຈະການດັ່ງກ່າວ ໃສ່ດ້ານຫຼັງໃບທະບຽນວິສາຫະກິດ;

- ກິດຈະການທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ ແມ່ນເຈົ້າໜ້າທີ່ທະບຽນວິສາຫະກິດ ຈະເຮັດໜັງສືແນະນຳ ໃຫ້ວິສາຫະກິດ ເພື່ອປະສານກັບຂະແໜງການທີ່ກ່ຽວຂ້ອງ ຍື່ນຂໍອະນຸຍາດດຳເນີນທຸລະກິດໂດຍບໍ່ລະບຸກິດຈະການດັ່ງກ່າວ ໃສ່ດ້ານຫຼັງໃບທະບຽນວິສາຫະກິດ.

## I. ການຂຶ້ນທະບຽນວິສາຫະກິດ

### ກ. ບ່ອນຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ

1. ຂັ້ນສູນກາງ (ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ) ປະກອບດ້ວຍ: ການສ້າງຕັ້ງສາຂາວິສາຫະກິດຕ່າງປະເທດ, ລັດວິສາຫະກິດ, ວິສາຫະກິດຮຸ້ນສ່ວນ, ບໍລິສັດ ແລະ ວິສາຫະກິດສ່ວນບຸກຄົນ ທີ່ມີທຶນຈົດທະບຽນວິສາຫະກິດ ແຕ່ຫ້າຮ້ອຍລ້ານກີບ ຂຶ້ນໄປ ຊຶ່ງມີທີ່ຕັ້ງສຳນັກງານຢູ່ນະຄອນຫຼວງວຽງຈັນ ແລະ ແຂວງອື່ນທີ່ມີຄວາມຈຳເປັນ ໂດຍຈະມີແຈ້ງການສະເພາະໃນແຕ່ລະໄລຍະ;

2. ຂັ້ນແຂວງ (ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ) ປະກອບດ້ວຍ: ລັດວິສາຫະກິດ, ວິສາຫະກິດຮຸ້ນສ່ວນ, ບໍລິສັດ (ເວັ້ນເສັຍແຕ່ບໍລິສັດມະຫາຊົນ) ແລະ ວິສາຫະກິດສ່ວນບຸກຄົນ ທີ່ມີທຶນຈົດທະບຽນວິສາຫະກິດ ແຕ່ຫ້າຮ້ອຍລ້ານກີບ ຂຶ້ນໄປ ຊຶ່ງມີທີ່ຕັ້ງສຳນັກງານຢູ່ນະຄອນຫຼວງວຽງຈັນ ຫຼື ແຂວງນັ້ນໆ;



3. ຂັ້ນເມືອງ (ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ) ປະກອບດ້ວຍ: ສະຫະກອນ ແລະ ວິສາຫະກິດສ່ວນບຸກຄົນ ທີ່ມີທຶນຈົດທະບຽນວິສາຫະກິດ ຕ່ຳກວ່າຫ້າຮ້ອຍລ້ານກີບ ລົງມາ ຊຶ່ງມີທີ່ຕັ້ງສຳນັກງານ ຫຼື ທຸລະກິດຢູ່ເມືອງ ຫຼື ນະຄອນນັ້ນໆ.

### ຂ. ເອກະສານຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ

**ເອກະສານແຈ້ງຂຶ້ນທະບຽນວິສາຫະກິດສ່ວນບຸກຄົນ:**

1. ຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດສ່ວນບຸກຄົນ;

2. ໃບແຈ້ງລາຍການກິດຈະການທີ່ສະເໜີປະກອບທຸລະກິດ.

**ເອກະສານແຈ້ງຂຶ້ນທະບຽນວິສາຫະກິດຮຸ້ນສ່ວນ ຫຼື ບໍລິສັດ:**

1. ຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດຮຸ້ນສ່ວນ ຫຼື ບໍລິສັດ;

2. ໃບແຈ້ງລາຍການກິດຈະການທີ່ສະເໜີປະກອບທຸລະກິດ;

3. ສັນຍາສ້າງຕັ້ງວິສາຫະກິດ (ຍົກເວັ້ນບໍລິສັດຈຳກັດຜູ້ດຽວ).

ໃນກໍລະນີ ນິຕິບຸກຄົນແຈ້ງຂຶ້ນທະບຽນວິສາຫະກິດ ຕ້ອງມີໃບມອບສິດຈາກວິສາຫະກິດແມ່.

ໃນໃບແຈ້ງລາຍການກິດຈະການທີ່ສະເໜີປະກອບທຸລະກິດ, ຜູ້ລົງທຶນສາມາດລະບຸ: 1) ກິດຈະການໃນບັນຊີຄວບຄຸມ ຕາມດຳລັດຂອງນາຍົກ ສະບັບເລກທີ 03/ນຍ, ລົງວັນທີ 10 ມັງກອນ 2019 ແລະ 2) ກິດຈະການນອກບັນຊີຄວບຄຸມ ຕາມລະບຽບການຂອງຂະແໜງການຕ່າງໆ. ນອກຈາກນີ້ ຜູ້ລົງທຶນຍັງຕ້ອງໄດ້ພິຈາລະນາເຖິງ: 1) ກິດຈະການມີເງື່ອນໄຂສຳລັບຜູ້ລົງທຶນຕ່າງປະເທດ, 2) ກິດຈະການສະຫງວນໄວ້ສຳລັບພົນລະເມືອງລາວ ແລະ 3) ກິດຈະການເກືອດຫ້າມ.

ນອກຈາກເອກະສານ ທີ່ກ່າວມາເທິງນີ້ ຜູ້ລົງທຶນຍັງຈະຕ້ອງໄດ້ປະກອບເອກະສານ ຕາມແບບພິມສະເພາະ ແລະ ເອກະສານຄັດຕິດຈຳນວນໜຶ່ງ ທີ່ລະບຸໃນໝາຍເຫດຂອງບັນດາເອກະສານດັ່ງກ່າວນັ້ນດ້ວຍ.

### ຄ. ຂັ້ນຕອນ ແລະ ກຳນົດເວລາພິຈາລະນາຂຶ້ນທະບຽນວິສາຫະກິດ

1. ປະກອບເອກະສານ ແຈ້ງຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມການແບ່ງຂັ້ນພິຈາລະນາ ທີ່ກຳນົດໃນຂໍ້ (ກ);

2. ພາຍຫຼັງໄດ້ຮັບເອກະສານແລ້ວ ເຈົ້າໜ້າທີ່ທະບຽນວິສາຫະກິດ ຕ້ອງກວດກາຄວາມຖືກຕ້ອງຂອງເອກະສານ ຕາມທີ່ກຳນົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງ ສະບັບເລກທີ 0023/ອຄ.ກທຄວ, ລົງວັນທີ 9 ມັງກອນ 2019 ໃຫ້ສຳເລັດພາຍໃນ ໜຶ່ງຊົ່ວໂມງ ແລ້ວແຈ້ງຕອບຜູ້ຍື່ນຄຳຮ້ອງທັນທີ ຕາມກໍລະນີ ດັ່ງນີ້:

2.1 ເອກະສານຄົບຖ້ວນ ແລະ ຖືກຕ້ອງແມ່ນຈະມອບໃບຮັບເອກະສານ ໃຫ້ຜູ້ຍື່ນຄຳຮ້ອງ. ເນື້ອໃນໃບມອບຮັບເອກະສານປະກອບດ້ວຍ ວັນເວລາມື້ຮັບເອກະສານ ແລະ ມື້ນັດໝາຍມາຮັບເອົາໃບທະບຽນ



ວິສາຫະກິດ ຊ້າສຸດບໍ່ເກີນ ສິບວັນລັດຖະການ ນັບແຕ່ມື້ອອກໃບຮັບເອກະສານເປັນຕົ້ນໄປ.

2.2 ເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ແມ່ນຈະແຈ້ງໃຫ້ຜູ້ຍື່ນຄຳຮ້ອງທັນທີ ແລະ ຈະເຮັດໜັງສືແນະນຳໃຫ້ໄປປັບປຸງແກ້ໄຂ ໂດຍຊີ້ໃຫ້ເຫັນຈະແຈ້ງ ຈຸດທີ່ຕ້ອງປັບປຸງແກ້ໄຂ ແລະ ລົງລາຍເຊັນຜູ້ແນະນຳ ໃນເອກະສານແນະນຳດັ່ງກ່າວ. ພາຍຫຼັງປັບປຸງແກ້ໄຂສຳເລັດຄົບຖ້ວນ ແລະ ຖືກຕ້ອງແລ້ວ ແມ່ນປະຕິບັດຕາມຂັ້ນຕອນ ແລະ ກຳນົດເວລາ ທີ່ກຳນົດໄວ້ໃນ ຂໍ້ 2.1 ເທິງນີ້.

### ງ. ຄ່າບໍລິການ ແລະ ຄ່າທຳນຽມອອກທະບຽນວິສາຫະກິດ

#### 1. ຄ່າບໍລິການ

#### 1.1 ຄ່າແບບພິມ:

| ລາຍການ | ຄ່າໃຊ້ຈ່າຍ |
|---|---|
| - ວິສາຫະກິດສ່ວນບຸກຄົນ | 10.000 ກີບ |
| - ວິສາຫະກິດຮຸ້ນສ່ວນສາມັນ | 60.000 ກີບ |
| - ວິສາຫະກິດຮຸ້ນສ່ວນຈຳກັດ | 60.000 ກີບ |
| - ບໍລິສັດຈຳກັດ | 60.000 ກີບ |
| - ບໍລິສັດຈຳກັດຜູ້ດຽວ | 50.000 ກີບ |
| - ບໍລິສັດມະຫາຊົນ | 60.000 ກີບ |
| - ສະຫະກອນ | 60.000 ກີບ |
| - ສາຂາວິສາຫະກິດ (ນິຕິບຸກຄົນຕ່າງປະເທດ) | 10.000 ກີບ |
| - ຄຳຮ້ອງປ່ຽນແປງເນື້ອໃນ | 10.000 ກີບ |

#### 1.2 ຄ່າທຳນຽມຕ່າງໆ:

| ລາຍການ | ຄ່າໃຊ້ຈ່າຍ |
|---|---|
| - ພິມທະບຽນວິສາຫະກິດ | 30.000 ກີບ/1ຊຸດ |
| - ຮັບຮອງການປ່ຽນແປງເນື້ອໃນ | 30.000 ກີບ/1ຊຸດ |
| - ລົງທະບຽນສ້າງຕັ້ງສາຂາພາຍໃນປະເທດ | 100.000 ກີບ/ສາຂາ |
| - ລົງທະບຽນແຈ້ງຍຸບເລີກຊົ່ວຄາວ ຫຼື ຖາວອນ | 50.000 ກີບ/ຄັ້ງ |
| - ລົງທະບຽນສິ້ນສຸດການຊຳລະສະສາງ | 50.000 ກີບ/ຄັ້ງ |
| - ຄ່າອັດສຳເນົາເອກະສານ | 2.000 ກີບ/1ໃບ |

### 2. ຄ່າທຳນຽມອອກທະບຽນວິສາຫະກິດ

| ລາຍການ | ຄ່າໃຊ້ຈ່າຍ |
|---|---|
| - ແຕ່ 1.000.000 ກີບລົງມາ | ບໍ່ມີ |
| - ຫຼາຍກວ່າ 1 ລ້ານກີບ ຫາ 10 ລ້ານກີບ | 20.000 ກີບ |
| - ຫຼາຍກວ່າ 10 ລ້ານກີບ ຫາ 20 ລ້ານກີບ | 50.000 ກີບ |
| - ຫຼາຍກວ່າ 20 ລ້ານກີບ ຫາ 50 ລ້ານກີບ | 100.000 ກີບ |
| - ຫຼາຍກວ່າ 50 ລ້ານກີບ ຫາ 100 ລ້ານກີບ | 300.000 ກີບ |
| - ຫຼາຍກວ່າ 100 ລ້ານກີບ ຫາ 400 ລ້ານກີບ | 500.000 ກີບ |
| - ຫຼາຍກວ່າ 400 ລ້ານກີບ ຫາ 1 ຕື້ກີບ | 1.000.000 ກີບ |
| - ຫຼາຍກວ່າ 1 ຕື້ກີບ ຫາ 10 ຕື້ກີບ | 2.000.000 ກີບ |
| - ຫຼາຍກວ່າ 10 ຕື້ກີບ ຫາ 20 ຕື້ກີບ | 3.000.000 ກີບ |
| - ຫຼາຍກວ່າ 20 ຕື້ກີບ ຂຶ້ນໄປ | 5.000.000 ກີບ |

ແບບພິມ ແລະ ຂໍ້ມູນລະອຽດ ດາວໂຫຼດໄດ້ທີ່ - www.ned.gov.la

## II. ການຂໍອະນຸຍາດດຳເນີນທຸລະກິດ ພາຍຫຼັງຂຶ້ນທະບຽນວິສາຫະກິດ

### 1. ໄລຍະເວລາທີ່ຕ້ອງຍື່ນຂໍອະນຸຍາດດຳເນີນທຸລະກິດ

ພາຍໃນກຳນົດເວລາ ເກົ້າສິບວັນ ນັບແຕ່ວັນທີ່ໄດ້ຮັບການຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ ວິສາຫະກິດກ່ຽວຂ້ອງ ຕ້ອງໄປຍື່ນຂໍອະນຸຍາດດຳເນີນທຸລະກິດ ນຳຂະແໜງການທີ່ກ່ຽວຂ້ອງ ໃນກິດຈະການໃດໜຶ່ງ ຕາມທີ່ໄດ້ລະບຸໄວ້ໃນໜັງສືແນະນຳໃຫ້ວິສາຫະກິດ ໃນກິດຈະການທີ່ຕ້ອງຂໍອະນຸຍາດ ເວັ້ນເສຍແຕ່ໄດ້ມີກິດຈະການໃດໜຶ່ງລະບຸໃນດ້ານຫຼັງໃບທະບຽນວິສາຫະກິດແລ້ວ.

ວິສາຫະກິດ ທີ່ຂຶ້ນທະບຽນວິສາຫະກິດ ກ່ອນການຈັດຕັ້ງປະຕິບັດຂໍ້ຕົກລົງ ສະບັບເລກທີ 0023/ອຄ.ກທຄວ, ລົງວັນທີ 9 ມັງກອນ 2019 ວ່າດ້ວຍການຂຶ້ນທະບຽນວິສາຫະກິດ ແມ່ນໃຫ້ສືບຕໍ່ຈັດຕັ້ງປະຕິບັດ. ຫາກຕ້ອງການດຳເນີນທຸລະກິດ ໃນກິດຈະການໃດໜຶ່ງເພີ່ມເຕີມ ແມ່ນສາມາດສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງໂດຍກົງ.

### 2. ບ່ອນຍື່ນ, ຂັ້ນຕອນ ແລະ ກຳນົດເວລາພິຈາລະນາຄຳຮ້ອງຂໍອະນຸຍາດ

ພາຍຫຼັງຂຶ້ນທະບຽນວິສາຫະກິດແລ້ວ, ກິດຈະການນອກບັນຊີຄວບຄຸມ ໃຫ້ຍື່ນຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ ນຳຂະແໜງການທີ່ກ່ຽວຂ້ອງ ຕາມເງື່ອນໄຂ, ຂັ້ນຕອນ ແລະ ກຳນົດເວລາ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### 3. ເອກະສານຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ

ເອກະສານຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ ປະກອບດ້ວຍ: 1) ໃບທະບຽນວິສາຫະກິດ ແລະ ໜັງສືແນະນຳ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ 2) ເອກະສານຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ ຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ.



## ແຜນວາດ (ລວມ)
## ການຂຶ້ນທະບຽນວິສາຫະກິດ ເຊື່ອມກັບຂອດການຂໍອະນຸຍາດດຳເນີນທຸລະກິດ






# ຂັ້ນຕອນ, ຄ່າທຳນຽມ ແລະ ກຳນົດເວລາ ການແຈ້ງຂຶ້ນທະບຽນວິສາຫະກິດ ຢູ່ ສປປ ລາວ

ສະໜັບສະໜູນໂດຍ:

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ທີ່ຢູ່: ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ໂທລະສັບ: +856 21 412011 ແຟັກ: +856 21 453865
ເວັບໄຊ: www.ned.gov.la